ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0073 /ທຄຕລ.2026
ນະຄອນຫຼວງວຽງຈັນ, ວັນທີ: 29/1/2026

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາໂຮງພິມ ທີ່ດຳເນີນທຸລະກິດບໍລິການສິ່ງພິມ ໃນນະຄອນຫຼວງວຽງຈັນ.

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນສິ່ງພິມ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງທ່ານຜູ້ສະໜອງ ຜູ້ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ບໍລິການຜະລິດ ແບບຟອມ-ສິ່ງພິມ ເພື່ອນຳໃຊ້ເຂົ້າໃນວຽກງານບໍລິການ ຂອງ ທຄຕລ, ດັ່ງມີລາຍການລຸ່ມນີ້:

| ລ/ດ | ລາຍການ | ຈຳນວນ | ລາຍລະອຽດ |
|---|---|---|---|
| 1. | **ຂາຕັ້ງ One pay:**<br> | 130,000 ຊຸດ | - ຖານຕັ້ງໄມ້ 12(W) * 3(H) * 6(D) cm + Laser 1 ຈຸດ<br>- ແຜ່ນອະຄີລິກໃສສອງດ້ານ ສາມາດສອດເຈ້ຍໄດ້ ໜາ 2 mm / 12*19.5 cm<br>- ຢາງສີລີໂຄນ<br>- ພິມເຈ້ຍອາດມັນ 160gsm ພິມ 4 ສີ 1 ດ້ານ/ 12*19.5 cm<br>- ແຜ່ນສະຕິກເກີ້ໃສ ຕິດບາໂຄດ 10*10 cm<br>- ການຫຸ້ມຫໍ່: 50 ຊຸດ/ແກັດ, ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ<br>- ຈັດສົ່ງ 03 ຄັ້ງ 1: 50,000 ຊຸດ, ຄັ້ງ 2: 50,000 ຊຸດ; ຄັ້ງ 2: 30,000 ຊຸດ; ຫ່າງກັນ 3-5 ເດືອນ ຫຼື ຕາມ ທຄຕລ ແຈ້ງ<br>**(Artwork ແຕ່ລະໄລຍະອາດມີການປ່ຽນແປງ)** |
| 2. | **ປ້າຍຫ້ອຍ One pay:**<br> | 50,000 ຊຸດ | - ແຜ່ນ Plastic PVC 1mm ພິມສີສອງດ້ານ / 11*17.8 cm<br>- ສາຍໄສ້ເຫຼັກໜາເຄືອບກັນໜັງຽງສູງ 8 cm + ແຜ່ນຕິດ<br>- ແຜ່ນສະຕິກເກີ້ໃສ ຕິດບາໂຄດ 10*10 cm (2 ແຜ່ນ/ຊຸດ)<br>- ການຫຸ້ມຫໍ່: 100 ຊຸດ/ແພັກ, 05 ແພັກ/ແກັດ, ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ.<br>- ຈັດສົ່ງ 02 ຄັ້ງ: ຄັ້ງລະ 25,000 ຊຸດ, ຫ່າງກັນ 3-5 ເດືອນ. |
| 3. | ເຈ້ຍ receipt ATM | 1,000 ກໍ້ | - ເຈ້ຍເທີມໍ (Thermal paper) 65gsm_80*180mm, ພິມ 4 ສີ, ແກນຮອບໃນ 2,6 cm<br>- ການຫຸ້ມຫໍ່ : 8ກໍ້/ແກັດ ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ |
| 4. | ເຈ້ຍກົດບັດຄິວ | 2,500 ກໍ້ | - ເຈ້ຍເທີມໍ (Thermal paper) 54 gsm_80*80 mm, ຮູແກນຮອບໃນ 1,5 ຊມ<br>- ການຫຸ້ມຫໍ່ : 50ກໍ້/ 1ແກັດ ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ |

| | | | |
|---|---|---|---|
| 5. | ເຈ້ຍພິມລະຫັດບັດ ATM | 30,000 ຊຸດ | - ເຈ້ຍເຄມີຕໍ່ເນື່ອງ 4" * 8,5" 2 ໃບ/ຊຸດ, ພິມ 4 ສີ, ເຈ້ຍລຸ່ມ ສີຂາວ 1 ສີ, ຕິດຊອງ 4 ດ້ານ, ພິມເລກທີ 1ແຖວ 8 ຕົວເລກ (ພິມເລກຕໍ່ກັນເລີຍ)<br>- ການຫຸ້ມຫໍ່ : 3,000ຊຸດ/ແກັດ, ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ |
| 6. | ແບບຟອມໂອນເງິນດ່ວນ Moneygram (ຮັບ) | 370,000 ຊຸດ | - ຂະໜາດ 17 x 21 cm, 2 ໃບ/ຊຸດ,<br>- ເຈ້ຍເຄມີ ( OJI ) 55 gsm, ຂາວເທິງ ,ຂາວລຸ່ມ , ພິມສີ 1 ດ້ານ, ຂາວດຳ 1 ດ້ານ,ກາວຂ້າງ ,ຈິກເປັນຊຸດ<br>- ການຫຸ້ມຫໍ່ : 500ຊຸດ/ຫໍ່ ,5 ຫໍ່/ ມັດ ພ້ອມລະບຸຕົວຢ່າງສິນຄ້າດ້ານນອກແກັດ |
| | **ໝາຍເຫດ:**<br>1. ຜູ້ສະໜອງສາມາດເຂົ້າຮ່ວມປະມູນທຸກລາຍການ ຫຼື ລາຍການໃດໜຶ່ງ ກໍ່ໄດ້, ສ່ວນການພິຈາລະນາແມ່ນ ທຄຕລ ຈະຄັດເລືອກເປັນແຕ່ລະລາຍການ, ຄັດເລືອກຈາກຫຼາຍເງື່ອນໄຂ, ບໍ່ໄດ້ພິຈາລະນາພຽງແຕ່ມູນຄ່າພຽງຢ່າງດຽວ.<br>2. Artwork ແຕ່ລະໄລຍະອາດມີການປ່ຽນແປງ.<br>3. ສາມາດເຂົ້າມາເບິ່ງຕົວຢ່າງແທ້ ຫຼື ຫາກຕ້ອງການ File ຮູບເພີ່ມຕື່ມ ສາມາດພົວພັນໄດ້ທີ່ ພະແນກຫ້ອງການບໍລິຫານ-ການເງິນ ທຄຕລ ສຳນັກງານໃຫຍ່ ຊັ້ນ 4 ຕຶກ C ແຕ່ວັນນີ້ ຈົນເຖິງ 04/02/2026 ໃນໂມງລັດຖະການ. | | |

- **ເງື່ອນໄຂຂອງ, ໂຮງພິມ ທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບເອກະສານດັ່ງນີ້:**
  - **ເອກະສານ ຊອງທີ 01:**

1.1 ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດບໍລິການຜະລິດສິ່ງພິມ, ດຳເນີນທຸລະກິດ ຢ່າງໜ້ອຍ 02 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2023,2024 ແລະ ຮ່າງແບບຟອມຂອງ ທຄຕລ ທີ່ຄັດຕິດມາພ້ອມນີ້ .

1.2 ກຳນົດຍື່ນລາຍລະອຽດຂ້າງເທິງ ສາມາດຍື່ນໄດ້ນັບຈາກ ວັນນີ້ ເຖິງ ວັນສຸກ, ທີ 06/02/2026 ກ່ອນເວລາ 11:00 ໂມງ ໂດຍການສົ່ງຟາຍ PDF ເຂົ້າມາທີ່ E-mail: procurement@bcel.com.la **ພ້ອມທັງສົ່ງສິນຄ້າຕົວຢ່າງໃຫ້ ທຄຕລ ທົດລອງນຳໃຊ້ (Test)** ທີ່ພະແນກຫ້ອງການບໍລິຫານ-ການເງິນ ຊັ້ນ 4 ຕຶກ C.

  - **ເອກະສານ ຊອງທີ 02 (ປິດຊອງ):**

2.1 ທຄຕລ ຈະແຈ້ງສະເພາະຜູ້ທີ່ຜ່ານເງື່ອນໄຂຮອບທີ 01 ເທົ່ານັ້ນເພື່ອເຂົ້າມາຍື່ນຊອງລາຄາ ໃນວັນພຸດ ທີ **18/02/2025 ເວລາ 09:00** ໂມງ. ສະນັ້ນ, ຜູ້ສະໜອງຈະຕ້ອງຖືຊອງລາຄາມາດ້ວຍຕົວເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 05 ຕຶກ C.

2.2 ໃບສະເໜີລາຄາໃຫ້ລະບຸ ລາຄາ/ໜ່ວຍ ແລະ ລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບ.

2.3 ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນບໍ່ໃຫ້ຫຼຸດ 10% ຂອງມູນຄ່າທັງໝົດລວມອາກອນ ດ້ວຍໜັງສືຄໍ້າປະກັນທີ່ອອກ ໂດຍ ທຄຕລ (ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງວັນທີ 30/04/2026) ຫຼື ແຊັກທີ່ວີຊ່າແລ້ວ (ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງແຊັກ/ໜັງສື ຄໍ້າປະກັນດັ່ງກ່າວຄືນໃຫ້ຜູ້ສະໜອງທີ່ບໍ່ໄດ້ຮັບການຄັດເລືອກ, ສຳລັບຜູ້ສະໜອງທີ່ໄດ້ຮັບການຄັດເລືອກ ແມ່ນຈະສົ່ງຄືນຫຼັງຈາກສົ່ງສິນຄ້າໃຫ້ ທຄຕລ ຖືກຕ້ອງຄົບຖ້ວນ.

2.4 ຖ້າຜູ້ສະໜອງບໍ່ວາງເງິນຄໍ້າປະກັນການປະມູນ ຕາມທີ່ລະບຸໄວ້ໃນຂໍ້ທີ 2.3 ແມ່ນ ທຄຕລ ຈະປະຕິເສດການຍື່ນຊອງໃບສະເໜີລາຄາ.

**ໝາຍເຫດ**: ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

➢ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຜູ້ຊະນະການປະມູນຕ້ອງມີຄວາມສາມາດຈັດສົ່ງສິນຄ້າ ຈຳນວນທັງໝົດສຳເລັດພາຍໃນ 50 ວັນ ນັບຈາກມື້ຮອງຮັບແບບ ແລະ ໄດ້ຮັບໜັງສືສັ່ງຊື້.
- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.
- ການຊຳລະແມ່ນຈ່າຍເງິນງວດດຽວ 100% ຕາມມູນຄ່າສັ່ງຊື້ ຈັດສົ່ງສິນຄ້າພາຍຫຼັງໄດ້ຮັບເຄື່ອງຄົບຖ້ວນ, ພ້ອມທັງໄດ້ຮັບການຢັ້ງຢືນຈາກພາກສ່ວນກ່ຽວຂ້ອງ ແລະ ກວດກາຄວາມຖືກຕ້ອງຈາກທັງສອງຝ່າຍ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນ ມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ສຳນັກງານໃຫຍ່ ນະຄອນຫຼວງວຽງຈັນ

ນ.ສາຍສະໝອນ ຈັນທະຈັກ

ຕິດຕໍ່ພົວພັນ:
021 213200 ຕໍ່ 414 ( ໂມງລັດຖະການ )

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ………..../ທຄຕລ, ລົງວັນທີ …………………..

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ | ໃບອະນຸຍາດດຳເນີນທຸລະກິດ | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ທີ່ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ……… | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | …. ປີ | (ໃຫ້ລະບຸ) | | ພາຍນ ຫຼື ຕ່າງປະເທດ | …. ປີ | …… | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ ......................
ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: